ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ **0874** /ອຄ.ກຄພນ
ນະຄອນຫຼວງວຽງຈັນ, ວັນທີ **02 ມິຖຸນາ 2017**

**ຄຳສັ່ງ**
**ວ່າດ້ວຍ ການຕິດຕາມ, ກວດກາ ແລະ ສະກັດກັ້ນ ການນຳເຂົ້າ, ເຄື່ອນຍ້າຍ ແລະ ຈຳໜ່າຍ, ໝູ ຊີ້ນ, ຊີ້ນໝູ (ສົດ ແລະ ແຊ່ແຂງ) ແລະ ຊີ້ນສ່ວນຜະລິດຕະພັນສັດ ທີ່ບໍ່ຖືກຕ້ອງ**

**ເຖິງ: ຫົວໜ້າພະແນກ ອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ.**

- ອີງຕາມ ດຳລັດ ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ສະບັບເລກທີ 474/ນຍ, ລົງວັນທີ 18 ພະຈິກ 2010;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 522/ນຍ, ລົງວັນທີ 23 ທັນວາ 2011;
- ອີງຕາມ ແຈ້ງການຂອງຫ້ອງວ່າການລັດຖະບານ ສະບັບເລກທີ 158/ຫສນຍ.ກສສ, ລົງວັນທີ 31 ມັງກອນ 2017 ກ່ຽວກັບການສະກັດກັ້ນການນຳເຂົ້າລູກໝູ ແລະ ໝູຊີ້ນ ຈາກປະເທດເພື່ອນບ້ານ.

ເພື່ອເປັນການສະກັດກັ້ນການນຳເຂົ້າ, ການເຄື່ອນຍ້າຍ ລູກໝູ, ພໍ່ແມ່ພັນໝູ, ໝູຊີ້ນ ແລະ ຊີ້ນໝູ (ສົດ ແລະ ແຊ່ແຂງ) ລວມທັງຊີ້ນສ່ວນສັດທີ່ນຳເຂົ້າບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ເຊິ່ງອາດສົ່ງຜົນກະທົບຕໍ່ການຜະລິດໝູ ແລະ ການສະໜອງຊີ້ນໝູ ເພື່ອບໍລິໂພກຢູ່ພາຍໃນ ພ້ອມທັງຫຼີກລ້ຽງການນຳເຂົ້າທີ່ອາດມີເຊື້ອພະຍາດຕ່າງໆເຂົ້າມາແຜ່ລະບາດຢູ່ປະເທດເຮົາ.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຄຳສັ່ງ**:

1. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ປະສານສົມທົບກັບຂະແໜງການກ່ຽວຂ້ອງຂັ້ນທ້ອງຖິ່ນຂອງຕົນ ເພື່ອຕິດຕາມ, ກວດກາ, ຕ້ານ ແລະ ສະກັດກັ້ນການນຳເຂົ້າ, ການເຄື່ອນຍ້າຍ ແລະ ຈຳໜ່າຍ ໝູຊີ້ນ ແລະ ຊີ້ນໝູ (ສົດ ແລະ ແຊ່ແຂງ) ລວມທັງຊີ້ນສ່ວນສັດຂອງບຸກຄົນ ຫຼື ນິຕິບຸກຄົນ ທີ່ນຳເຂົ້າບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຖ້າພົບເຫັນໃຫ້ປະຕິບັດມາດຕະການຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ;
2. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ເກັບກຳຂໍ້ມູນສະຖິຕິ, ຂື້ນແຜນເພື່ອດຸ່ນດ່ຽງການສະໜອງ ແລະ ຄວາມຕ້ອງການບໍລິໂພກຊີ້ນໝູ ແລະ ຜະລິດຕະພັນໝູ, ຖ້າຫາກບໍ່ພໍໃຫ້ຂື້ນແຜນເພື່ອຂໍນຳເຂົ້າເປັນແຕ່ລະກໍລະນີ;
3. ໃຫ້ຄຸ້ມຄອງລາຄາສິນຄ້າສະບຽງອາຫານປະເພດຊີ້ນໝູຕາມຫຼັກການສິນຄ້າຄວບຄຸມ; ການຄຸ້ມຄອງທັງຂອດເກັບຊື້, ຂອດຂາຍຍົກ ແລະ ຂອດຂາຍຍ່ອຍ ໄປພ້ອມໆກັນ, ເປັນ ຕົ້ນແມ່ນຂອດນາຍຮ້ອຍ ແລະ ຂອດລູກຂຽງ ບົນພື້ນຖານໂຄງປະກອບລາຄາທີ່ຊັດເຈນຢູ່ໃນແຂວງນັ້ນໆ
4. ເຜີຍແຜ່ ແລະ ຊີ້ນຳຜູ້ປະກອບການ ໃຫ້ເອົາໃຈໃສ່ຈັດຕັ້ງປະຕິບັດ ແລະ ຮັບຜິດຊອບຢ່າງເປັນເຈົ້າການ, ກ່ອນຈະຂຶ້ນ ຫຼື ລົງລາຄາຊີ້ນໝູໃນແຕ່ລະຄັ້ງ, ຜູ້ປະກອບການຕ້ອງສະເໜີການປ່ຽນແປງລາຄາດັ່ງກ່າວເຖິງພາກລັດທີ່ກ່ຽວຂ້ອງ ເພື່ອຮັບຮອງ ແລະ ອະນຸມັດໃຫ້ຈຶ່ງສາມາດປະຕິບັດໄດ້;

5. ການນຳເຂົ້າໝູ, ຜະລິດຕະພັນໝູ ແລະ ຜະລິດຕະພັນສິນຄ້າທີ່ກ່ຽວກັບສັດມາຈຳໜ່າຍ ໃນ ສປປ ລາວ ຕ້ອງມີເອກະສານຕົ້ນຕໍ ດັ່ງນີ້:

- ມີໃບອະນຸຍາດນຳເຂົ້າທີ່ອອກໃຫ້ໂດຍອີງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ (ຂະແໜງກະສິກຳ ແລະ ປ່າໄມ້);
- ມີໃບຢັ້ງຢືນສຸຂະພາບສັດ ຫຼື ໃບຢັ້ງຢືນສຸຂານາໄມຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ອອກໃຫ້ໂດຍອົງການ ຫຼື ເຈົ້າໜ້າທີ່ຂອງລັດທີ່ກ່ຽວຂ້ອງຂອງປະເທດຕົ້ນທາງ ທີ່ຖືກຕ້ອງຕາມເງື່ອນໄຂການນຳເຂົ້າຂອງ ສປປ ລາວ;
- ມີເອກະສານອື່ນທີ່ກ່ຽວຂ້ອງຕາມການກຳນົດຂອງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ໃນກໍລະນີນຳເຂົ້າ ເພື່ອລ້ຽງເປັນແນວພັນ;
- ໃນກໍລະນີຫາກໄດ້ຮັບອະນຸຍາດໃຫ້ນຳເຂົ້າສັດ, ຜະລິດພັນສັດ ຫຼື ຜະລິດຕະພັນສິນຄ້າທີ່ກ່ຽວກັບສັດ ຕ້ອງນຳເຂົ້າຜ່ານດ່ານສາກົນທີ່ໄດ້ຮັບອະນຸຍາດ;

ນອກນີ້, ທຸກການນຳເຂົ້າ, ເຄື່ອນຍ້າຍລູກໝູ, ພໍ່ແມ່ພັນໝູ, ໝູຊີ້ນ ແລະ ຊີ້ນໝູ (ສົດ ແລະ ແຊ່ແຂງ) ລວມທັງຊີ້ນສ່ວນສັດແມ່ນໃຫ້ປະຕິບັດຕາມຄຳສັ່ງຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍການຄຸ້ມຄອງການເຄື່ອນຍ້າຍລູກໝູ ແລະ ໝູຊີ້ນ ເຂົ້າ ສປປ ລາວ;

6. ນອກຈາກເອກະສານທີ່ກ່າວມາຂ້າງເທິງແລ້ວ, ການກວດກາຕົວຈິງໃຫ້ສັງເກດເບິ່ງຈຳນວນ, ປະລິມານ, ຄຸນລັກສະນະຂອງສິນຄ້າ ເພື່ອໃຫ້ຖືກຕ້ອງຕາມເອກະສານອະນຸຍາດໃຫ້ນຳເຂົ້າ ຫຼື ເຄື່ອນຍ້າຍ;
7. ມອບໃຫ້ເຈົ້າໜ້າທີ່ກວດກາການຄ້າ ດຳເນີນການຕິດຕາມ-ກວດກາເປັນປົກກະຕິ ເພື່ອເຝົ້າລະວັງ ແລະ ສະກັດກັ້ນ ຜູ້ລະເມີດ, ຝ່າຝືນ, ນຳເຂົ້າ ຫຼື ລັກລອບນຳເຂົ້າ ໝູຊີ້ນ, ຊີ້ນໝູ (ສົດ ແລະ ແຊ່ແຂງ) ແລະ ຊີ້ນສ່ວນຜະລິດຕະພັນສັດ ໃຫ້ສົມທົບກັບພາກສ່ວນທີ່ກ່ຽວຂ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ ດ້ວຍການກ່າວເຕືອນ, ປັບໃໝ ຫຼື ດຳເນີນຄະດີທາງແພ່ງ ຫຼື ທາງອາຍາຕາມແຕ່ລະກໍລະນີໜັກ ຫຼື ເບົາ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;
8. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ແຕ່ງຕັ້ງພະນັກງານຂອງຕົນລົງຕິດຕາມ, ກວດກາ ແຫຼ່ງທີ່ມາຂອງຊີ້ນໝູ ໂດຍປະສານສົມທົບກັບຈັດສັນຕະຫຼາດ ຫຼື ເຈົ້າຂອງຕະຫຼາດ ແລະ ພະນັກງານສັດຕະວະແພດ ເພື່ອຢັ້ງຢືນຄວາມຖືກຕ້ອງ ເຊັ່ນ: ໃບນຳສົ່ງຊີ້ນຈາກໂຮງງານຂ້າສັດ, ໃບເສຍພັນທະອາກອນ ແລະ ອື່ນໆ;
9. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ລາຍງານຜົນການຈັດຕັ້ງປະຕິບັດທຸກໆເດືອນ, ຖ້າຫາກພົບຂໍ້ຫຍຸ້ງຍາກໃນເວລາຈັດຕັ້ງປະຕິບັດ ໃຫ້ລາຍງານຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ (ກົມການຄ້າພາຍໃນ) ເພື່ອຄົ້ນຄວ້າ ແລະ ໃຫ້ທິດຊີ້ນຳວິທີການແກ້ໄຂ;
10. ມອບໃຫ້ກົມການຄ້າພາຍໃນ ສົມທົບພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ເປັນເຈົ້າການຊີ້ນຳ ໃນການຕິດຕາມ, ກວດກາ ຮ່ວມກັບບັນດາຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ເພື່ອສະກັດກັ້ນບັນຫາດັ່ງກ່າວຢ່າງເຂັ້ມງວດ;
11. ຄຳສັ່ງສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ເຂັມມະນີ ພົນເສນາ

<u>ບ່ອນສົ່ງ:</u>

| | | |
|---|---|---|
| - | ຫ້ອງການສຳນັກງານນາຍົກລັດຖະມົນຕີ | 01 ສະບັບ (ເພື່ອໃຊ້ຕາງລາຍງານ); |
| - | ກະຊວງກະສິກຳ ແລະ ປ່າໄມ້ | 01 ສະບັບ (ເພື່ອໃຊ້ຕາງລາຍງານ); |
| - | ກະຊວງການເງິນ | 01 ສະບັບ (ເພື່ອໃຊ້ຕາງລາຍງານ); |
| - | ຫ້ອງວ່າການແຂວງ, ນະຄອນຫຼວງ | 01 ສະບັບ (ເພື່ອໃຊ້ຕາງລາຍງານ); |
| - | ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ | 01 ສະບັບ. |
| - | ຫ້ອງການ, ບັນດາກົມ ແລະ ສະຖາບັນຄົ້ນຄວ້າເສດຖະກິດ ແລະ ການຄ້າ 01 ສະບັບ. | |